ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 0515 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 17 ກຸມພາ 2023

# ໜັງສືແຈ້ງເຊີນຍື່ນເຈດຈຳນົງຄວາມສົນໃຈ

## ສຳລັບການຈັດຈ້າງ ບໍລິສັດທີ່ປຶກສາ ໃນການຄຸ້ມຄອງລະບົບຂໍ້ມູນຂ່າວສານການເງິນ

- ອີງຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະຊວງການເງິນ ສະບັບເລກທີ 6118/ກງ, ລົງ ວັນທີ 10 ທັນວາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດວ່າຈ້າງບໍລິສັດ ແລະ ຊ່ຽວຊານທີ່ປຶກສາ ໃນການຄຸ້ມຄອງລະບົບຂໍ້ມູນຂ່າວສານການເງິນ ສະບັບເລກທີ 0017/ກງ, ລົງວັນທີ 06 ມັງກອນ 2023.

1. ຫ້ອງການກະຊວງການເງິນ ໄດ້ຮັບອະນຸມັດໃຫ້ນຳໃຊ້ງົບປະມານປະຈຳປີ 2023 ບ້ວງທຶນເປັນທຶນສະໄໝ ຂອງກະຊວງການເງິນ ເພື່ອດຳເນີນການຈັດຊື້-ຈັດຈ້າງ ບໍລິສັດທີ່ປຶກສາ ໃນການຄຸ້ມຄອງລະບົບຂໍ້ມູນຂ່າວສານການເງິນ;
2. ການປະມູນຄັ້ງນີ້ ຈະດຳເນີນຕາມຂັ້ນຕອນ, ຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ລະບຽບການຈັດຕັ້ງປະຕິບັດຄຳແນະນຳ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ເຈົ້າຂອງໂຄງການ ຫ້ອງການກະຊວງການເງິນ ຂໍເຊີນບັນດາ ບໍລິສັດ ສຳລັບຄຸ້ມຄອງ, ຕິດຕາມ, ກວດສອບ ແລະ ແກ້ໄຂບັນຫາລະບົບພື້ນຖານໂຄງລ່າງເຄືອຂ່າຍ, ຄວາມປອດໄພ ແລະ ອຸປະກອນໄອທີ "ບໍລິສັດ ທີ່ປຶກສາ" ທີ່ມີຄວາມສົນໃຈ ຍື່ນໜັງສືສະແດງຄວາມສົນໃຈຂອງຕົນເພື່ອສະໜອງການບໍລິການດັ່ງກ່າວ. ບໍລິສັດທີ່ມີຄວາມສົນໃຈ ຕ້ອງສະໜອງຂໍ້ມູນທີ່ສະແດງເຖິງຄວາມເໝາະສົມໃນການສະໜອງການບໍລິການ ທີ່ມີຄຸນວຸທິ ແລະ ມີປະສົບການທີ່ກ່ຽວຂ້ອງໃນການປະຕິບັດການບໍລິການດັ່ງກ່າວ. ມາດຖານການຄັດເລືອກບໍລິສັດທີ່ຈະເຂົ້າມາເປັນທີ່ປຶກສາ ມີດັ່ງນີ້:
   - ຕ້ອງເປັນບໍລິສັດທີ່ໃຫ້ ບໍລິການຄຸ້ມຄອງ, ຕິດຕັ້ງລະບົບພື້ນຖານໂຄງລ່າງເຄືອຂ່າຍ ແລະ ໂທລະຄົມະນາຄົມ ທີ່ຖືກຕ້ອງຕາມກົດໝາຍໃນການດຳເນີນງານກ່ຽວກັບການບໍລິການທີ່ປຶກສາ (ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ ຮອດປີ 2022), ເປັນບໍລິສັດເອກະລາດ ແລະ ມີມາດຖານສາກົນສຳລັບວຽກງານການບໍລິການທີ່ກ່ຽວຂ້ອງ;
   - ມີໃບຢັ້ງຢືນການເສຍອາກອນປະຈຳປີ 2021 ຫຼື 2022;
   - ມີປະສົບການທົ່ວໄປຢ່າງໜ້ອຍ 5 ປີ ຂຶ້ນໄປທີ່ກ່ຽວກັບການດຳເນີນການ ທີ່ປຶກສາ ສຳລັບຄຸ້ມຄອງ, ຕິດຕາມ, ກວດສອບ ແລະ ແກ້ໄຂບັນຫາລະບົບພື້ນຖານໂຄງລ່າງເຄືອຂ່າຍ, ຄວາມປອດໄພ ແລະ ອຸປະກອນໄອທີ;
   - ສະແດງຫລັກຖານຄວາມສຳເລັດໃນການບໍລິການທີ່ປຶກສາຢ່າງໜ້ອຍ 03 ສັນຍາ ທີ່ພົວພັນກັບ ການຄຸ້ມຄອງ,

ຕິດຕາມ, ກວດສອບ ແລະ ແກ້ໄຂບັນຫາລະບົບພື້ນຖານໂຄງລ່າງເຄືອຂ່າຍ, ຄວາມປອດໄພ ແລະ ອຸປະກອນໄອທີ ໂດຍສະເພາະຫລັກຖານຄວາມສຳເລັດໃນການບໍລິການທີ່ປຶກສາພາຍໃນບັນດາອົງກອນຕ່າງໆ ທີ່ມີມູນຄ່າ 500 ລ້ານກີບຂຶ້ນໄປ ຕໍ່ປີ;

- ບໍລິສັດທີ່ເຂົ້າຮ່ວມການປະມູນໂຄງການດັ່ງກ່າວ ຕ້ອງໄດ້ມອບເງິນຄ່າຄໍ້າປະກັນຊອງປະມູນ 2% ຂອງມູນຄ່າໂຄງການທີ່ຕົນສະເໜີ;
- ສະໜອງໂຄງຮ່າງການຈັດຕັ້ງ ແລະ ບັນຊີລາຍຊື່ພະນັກງານຫລັກ ທີ່ເປັນຄົນຕ່າງປະເທດ ແລະ ຄົນພາຍໃນຂອງບໍລິສັດ;
- ສະໜອງຊີວະປະຫວັດ ທີມງານຜູ້ຊ່ຽວຊານຫລັກ ເພື່ອເປັນຂໍ້ມູນໃນການຂະບວນການຄັດເລືອກ.

4. ບໍລິສັດທີ່ປຶກສາຈະຖືກຄັດເລືອກຕາມຮູບແບບຈັດຈ້າງ ຕາມຄຸນນະພາບທີ່ກຳນົດໄວ້ ໃນຄຳແນະນຳ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
5. ບໍລິສັດບໍ່ມີສິດຂາຍໂຄງການໃຫ້ບໍລິສັດອື່ນປະຕິບັດວຽກໄດ້ ຍົກເວັ້ນການຕົກລົງເຫັນດີຂອງເຈົ້າຂອງໂຄງການ.
6. ບໍລິສັດທີ່ປຶກສາທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາຂໍ້ມູນກ່ຽວກັບ ໂຄງການຄຸ້ມຄອງ, ຕິດຕາມ, ກວດສອບ ແລະ ແກ້ໄຂບັນຫາລະບົບພື້ນຖານໂຄງລ່າງເຄືອຂ່າຍ, ຄວາມປອດໄພ ແລະ ອຸປະກອນໄອທີ  ໄດ້ທີ່ຢູ່ຂ້າງລຸ່ມນີ້ໃນໂມງລັດຖະການ (8:30 ໂມງ ຫາ 16:00 ໂມງ), ວັນຈັນ ເຖິງ ວັນສຸກ, ທີ່ ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ, ກະຊວງການເງິນ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ເບີໂທ: 021 417766 ຫຼື 020 95358468. ສຳລັບຊອງປະມູນລາຄາ 1.000.000 ກີບ (ໜຶ່ງລ້ານກີບ)/ຊອງ, ເລີ່ມແຕ່ວັນທີ 20 ກຸມພາ ຫາ 03 ມີນາ 2023;
7. ຊອງປະມູນຕ້ອງສົ່ງທີ່ ຫ້ອງປະຊຸມຊັ້ນ 3 ຂອງກະຊວງການເງິນ ກ່ອນເວລາ 14:00 ໂມງ ຂອງວັນທີ 03 ມີນາ 2023, ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກ ຈະບໍ່ອະນຸຍາດ, ຊອງປະມູນທີ່ສົ່ງຊ້າກວ່າ ເວລາທີ່ກຳນົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງຂອງວັນດຽວກັນ, ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ;
8. ສຳລັບເງື່ອນໄຂການປະມູນ ຂອງບໍລິສັດຜູ້ເຂົ້າຮ່ວມປະມູນ ແລະ ເອກະສານກຳນົດຂອບເຂດຄວາມຮັບຜິດຊອບ (TOR) ຈະໄດ້ກຳນົດໄວ້ລະອຽດໃນຊອງປະມູນ;
9. ບໍລິສັດ/ວິສາຫະກິດ ຕ້ອງປະກອບເອກະສານຕາມ ແລະ ແບບຟອມຄຳແນະນຳ ທີ່ໄດ້ກຳນົດໄວ້ໃຫ້ຄົບຖ້ວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ເຂົ້າຮ່ວມໃນການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າຫ້ອງການ

ສົມບູນ ອິນທະປັດຖາ